Washington State Department of Social & Health Services
Transforming lives

# ໃບຄວາມຄິດເຫັນຂອງການເຮັດວຽກເກີນເວລາສຳລັບຜູ້ໃຫ້ການບໍລິການສ່ວນບຸກຄົນ

ເຈັ້ຽຄວາມເຫັນໃບນີ້ມີຈຸດປະສົງທີ່ຈະຊ່ວຍຜູ້ໃຫ້ການບໍລິການສ່ວນບຸກຄົນໃຫ້ເຂົ້າໃຈກົດລະບຽບກ່ຽວກັບຂອບເຂດຂອງອາທິດເຮັດວຽກ ແລະ ການເຮັດວຽກເກີນເວລາ. ກະຣຸນາຕິດຕໍ່ຫາຜູ້ຈັດການເອກສານຂອງລູກຄ້າ ຫລື ແວ່ເຂົ້າປັຽມ **www.dshs.wa.gov/altsa/IPOT** ເພື່ອຣາຍຣະອຽດເພີ້ມເຕີມ.

## ຣາຍຣະອຽດກ່ຽວກັບການເຮັດວຽກເກີນເວລາທົ່ວໄປ

1. **ອາທິດເຮັດວຽກແມ່ນຫຍັງ?**
   ອາທິດເຮັດວຽກເລີ້ມຕົ້ນໃນວັນອາທິດໃນເວລາ 12:00 a.m. (ທ່ຽງຄືນ) ແລະ ຈົບລົງໃນວັນເສົາທີ່ຕິດຕາມມາໃນເວລາ 11:59 p.m.

2. **ຂອບເຂດຂອງອາທິດເຮັດວຽກ (WWL) ແມ່ນຫຍັງ ?**
   WWL ເປັນຈຳນວນຂອງຊົ່ວໂມງບໍລິການທັງຫມົດທີ່ທ່ານຈະເຮັດວຽກຢູ່ໃນອາທິດເຮັດວຽກ. ກົດຫມາຍຂອງຣັດວໍຊິງຕັນປີ 2016 ໄດ້ກໍ່ຕັ້ງຂອບເຂດຂອງຈຳນວນຊົ່ວໂມງທີ່ຜູ້ໃຫ້ການບໍລິການສ່ວນບຸກຄົນ (IP) ສາມາດເຮັດວຽກໄດ້ໃນອາທິດເຮັດວຽກອາທິດນຶ່ງ. IP ທຸກໆຄົນມີຂອບເຂດອາທິດເຮັດວຽກ (WWL). ທ່ານຈະເຮັດວຽກໄດ້ຮອດແຕ່ WWL ຂອງທ່ານເທົ່ານັ້ນເມື່ອເວລາຊົ່ວໂມງເຫລົ່ານັ້ນໄດ້ຖືກແຕ່ງຕັ້ງໃຫ້ທ່ານໂດຍລູກຄ້າຄົນນຶ່ງ ຫລື ຫລາຍຄົນ ແລະ ລູກຄ້າຜູ້ທີ່ທ່ານເຮັດວຽກໃຫ້ນັ້ນ ມີເງື່ອນໄຂໄດ້ຮັບຊົ່ວໂມງ. ລູກຄ້າຈະບໍ່ແຕ່ງຕັ້ງຊົ່ວໂມງໃຫ້ຫລາຍເກີນກວ່າຊົ່ວໂມງປະຈຳເດືອນທີ່ຖືກຕີຣາຄາປະເມີນຜົນໃຫ້ແລ້ວຢູ່ໃນແຜນການເບິ່ງແຍງດູແລຂອງເຂົາເຈົ້າ. WWL ຊ່ວຍຄວບຄຸມຄ່າໃຊ້ຈ່າຍຂອງການເຮັດວຽກເກີນເວລາເພື່ອຈະຮັບປະກັນວ່າເງິນທຶນສຳລັບການບໍລິການຍັງຈະມີໄວ້ໃຫ້ຢູ່ສຳລັບຄົນອື່ນທຸກໆຄົນຜູ້ທີ່ຕ້ອງການມັນ.

3. **ກົມ DSHS ພິຈາຣະນາຄິດໄລ່ WWL ຖາວອນຂອງຂ້າພະເຈົ້າແນວໃດ ແລະ ຂ້າພະເຈົ້າຈະຮູ້ຈັກ WWl ຖາວອນຂອງຂ້າພະເຈົ້າໄດ້ແນວໃດ?**
   ກົດຫມາຍຂອງຣັດໄດ້ຜ່ານສະພາໃນເດືອນເອໂປຣ 2016. ກົດຫມາຍອັນນີ້ໄດ້ກໍ່ຕັ້ງ **WWL 40** ຊົ່ວໂມງໃຫ້ **IP** ທຸກໆຄົນຜູ້ທີ່ໄດ້ເຮັດວຽກໂດຍການໄລ່ສະເລັ່ຽແລ້ວຫລາຍກວ່າ **40** ຊົ່ວໂມງບໍລິການຕໍ່ອາທິດຢູ່ໃນເດືອນແຈນຢູຣີ **2016. WWL** ກາຍເກີນ **40** ຊົ່ວໂມງໄດ້ຖືກຄິດໄລ່ໂດຍການຫານເອົາຊົ່ວໂມງບໍລິການທີ່ຖືກຈ່າຍເງິນໃຫ້ໃນເດືອນແຈນຢູຣີ **2016** ຂອງ **IP** ໃສ່ **4.33** ແລະ ປ່ຽນຂຶ້ນ ຫລື ລົງໄປໃສ່ນຶ່ງສ່ວນສີ່ຂອງຊົ່ວໂມງທີ່ໃກ້ຄຽງທີ່ສຸດ. ໃນເດືອນເມ **2016,** ກົມ **DSHS** ໄດ້ສົ່ງໃບແຈ້ງການໄປຫາ **IP** ຜູ້ທີ່ໄດ້ເຮັດວຽກໃນເດືອນແຈນຢູຣີ **2016** ພ້ອມດ້ວຍຣາຍຣະອຽດ **WWL** ຂອງເຂົາເຈົ້າ. ຈະບໍ່ມີ **WWL** ຖາວອນອັນໃດຈະກາຍເກີນຫລາຍກວ່າ **65** ຊົ່ວໂມງ. ຖ້າຫາກວ່າທ່ານເລີ້ມຕົ້ນເຮັດວຽກໃນຖານະເປັນ **IP** ຫລັງຈາກເດືອນແຈນຢູຣີ **2016, WWL** ຂອງທ່ານແມ່ນ **40** ຊົ່ວໂມງ.

4. **ຖ້າຫາກວ່າຂ້າພະເຈົ້າຄິດວ່າ WWL ຖາວອນຂອງຂ້າພະເຈົ້າໄດ້ຖືກຄິດໄລ່ຜິດພາດບໍ່ຖືກຕ້ອງເດ?**
   ຖ້າຫາກວ່າທ່ານຄິດວ່າ WWL ຂອງທ່ານໄດ້ຖືກຄິດໄລ່ເບິ່ງບໍ່ຖືກຕ້ອງ, ທ່ານສາມາດຍື່ນຄຳຮ້ອງຂໍໃຫ້ຜູ້ຈັດການເອກສານຂອງລູກຄ້າ ແລະ ກົມ DSHS ຈະກວດເບິ່ງຊົ່ວໂມງຂອງທ່ານຄືນອີງຕາມກົດຫມາຍ Washington Administrative Code 388-114-0050.

5. **WWL ຖາວອນຂອງຂ້າພະເຈົ້າຈະປ່ຽນແປງຈັກເທື່ອບໍ່?**
   ຖ້າຫາກວ່າວ່າ WWL ຂອງທ່ານແມ່ນໃນຣະຫວ່າງ 60.25 ແລະ 65 ຊົ່ວໂມງ, ມັນຈະລຸດລົງມາເປັນ 60 ຊົ່ວໂມງໃນເດືອນຈຸນລາຍ 1, 2017 ນອກຈາກວ່າມັນມີການປ່ຽນແປງໃນກົດຫມາຍ. ບໍ່ດັ່ງນັ້ນ, WWL ຖາວອນຂອງທ່ານຈະບໍ່ປ່ຽນແປງນານເທົ່ານານທີ່ທ່ານຍັງມີຄຸນນະວຸດທິເປັນ IP ຢູ່ຄືເກົ່າ. WWL ຂອງທ່ານຍັງຈະຢູ່ຄືເກົ່າຖ້າຫາກວ່າທ່ານມີຊ່ວງພັກຂາດຕອນໃນການບໍລິການ ແລະ ກັບຄືນມາເປັນ IP ອີກໃນອະນາຄົດ.

6. **ການບໍລິການແນວໃດແດ່ທີ່ຖືກລວມເຂົ້າໃສ່ໃນຊົ່ວໂມງບໍລິການຢູ່ໃນ WWL ຂອງຂ້າພະເຈົ້າ?**
   - ການເບິ່ງແຍງດູແລສ່ວນຕົວ
   - ການເບິ່ງແຍງດູແລເພື່ອບັນເທົາອາການ
   - ການຝຶກຝົນເກັບກຳເອົາຄວາມຊຳນານ
   - ການເບິ່ງແຍງດູແລຕໍ່ເວລາອອກໄປ

7. **WWL ຂອງຂ້າພະເຈົ້າກ່ຽວກັບເວລາເດີນທາງ, ການຝຶກຝົນທີ່ກົມ DSHS ບົ່ງໃຫ້ມີ, ຫລື ເວລາພັກທີ່ຖືກຈ່າຍເງິນໃຫ້ (PTO) ບໍ່?**
   ບໍ່. ເວລາເດີນທາງ, ການຝຶກຝົນທີ່ກົມ DSHS ບົ່ງໃຫ້ມີ, ຫລື PTO ບໍ່ໄດ້ຖືກລວມເຂົ້າໃສ່ໃນ WWL ຂອງທ່ານ. ມັນຫມາຍຄວາມວ່າທ່ານສາມາດເຮັດວຽກຮອດ WWL ຂອງທ່ານ ເພື່ອຈະເຮັດພາລະກິດສຳລັບລູກຄ້າຕາມທີ່ຕ້ອງການ, ເຖິງແມ່ນວ່າຢູ່ໃນອາທິດນັ້ນ ທ່ານຈະມີການຝຶກຝົນທີ່ຕ້ອງໄດ້ເຮັດ, ເວລາເດີນທາງທີ່ຖືກອະນຸຍາດໃຫ້ແລ້ວ ຫລື ເອົາເວລາ PTO ຢູ່ກໍຕາມ.

**ວຽກເກີນເວລາ (OT) ການຈ່າຍເງິນ**

**8. ຊົ່ວໂມງ OT ທີ່ຖືກຈ່າຍເງິນໃຫ້ຂອງຂ້າພະເຈົ້າຖືກຄິດໄລ່ແນວໃດ?**

ທ່ານຈະຖືກຈ່າຍເງິນຊົ່ວໂມງປົກກະຕິຂອງທ່ານສຳລັບທຸກໆຊົ່ວໂມງທີ່ທ່ານເຮັດວຽກຮອດ 40 ຊົ່ວໂມງຢູ່ໃນອາທິດເຮັດວຽກ. ສຳລັບທຸກໆເວລາທີ່ທ່ານເຮັດວຽກກາຍເກີນ 40 ຊົ່ວໂມງ, ທ່ານຈະຖືກຈ່າຍເງິນໃຫ້ 1.5 ເທົ່າຂອງເງິນຊົ່ວໂມງປົກກະຕິຂອງທ່ານ.

ລະບົບການຈ່າຍເງິນ IPOne ຈ່າຍຈຳນວນຊົ່ວໂມງທັງໝົດທີ່ທ່ານໄດ້ເຮັດວຽກໃນອາທິດເຮັດວຽກໃນອັດຕາປົກກະຕິຂອງທ່ານ (ອີງໃສ່ວ່າເປັນ "ອັດຕາເຕັມ"). ມັນຈະສະແດງໃຫ້ເຫັນຊົ່ວໂມງ OT ວ່າເປັນອັດຕາ ½ ເພີ້ມເຕີມສຳລັບຊົ່ວໂມງ OT. ຈຳນວນທັງໝົດທັງໝົດໄດ້ຖືກບວກເຂົ້າໃສ່ກັນສຳລັບຈຳນວນເງິນຈ່າຍສຸດທ້າຍ.

*ຕົວຢ່າງ:*

*ທ່ານໄດ້ເຮັດວຽກ 45 ຊົ່ວໂມງຢູ່ໃນອາທິດເຮັດວຽກ ແລະ ເງິນຊົ່ວໂມງປົກກະຕິຂອງທ່ານແມ່ນ $12/ຊົ່ວໂມງ.*

*ເງິນເບີກຂອງທ່ານຈະແມ່ນ:*

*45 ຊົ່ວໂມງ x $12 ຕໍ່ຊົ່ວໂມງ (ອັດຕາຈ່າຍເຕັມ) = $540*

*+5 ຊົ່ວໂມງກາຍເກີນເວລາ x $6 (ອັດຕາເຄິ່ງນຶ່ງ) = $30*

*ທັງໝົດ* *$540 +$30 = $570*

OT ຈະຖືກສະແດງໃຫ້ເຫັນຢູ່ໃນການບັນຣະຍາຍສະລູບຄວາມຂອງການຈ່າຍເງິນ ແລະ ຖືກແຍກອອກຈາກກັນຢູ່ໃນພາກສ່ວນເງິນເຮັດວຽກ. ຢູ່ໃນຕົວຢ່າງອັນນີ້, ພາກສ່ວນເງິນເຮັດວຽກຈະສະແດງໃຫ້ເຫັນຊົ່ວໂມງເບິ່ງແຍງດູແລສ່ວນຕົວ 45 ຊົ່ວໂມງ ແລະ ຊົ່ວໂມງ OT 5 ຊົ່ວໂມງ.

**9. ຂ້າພະເຈົ້າຈະຖືກຈ່າຍເງິນ OT ໃຫ້ບໍ່ ສຳລັບເວລາເດີນທາງ, ການຝຶກຝົນທີ່ຖືກບົ່ງໃຫ້ເອົາໂດຍກົມ DSHS, ຫລື ເວລາພັກທີ່ຖືກຈ່າຍເງິນໃຫ້ (PTO)?**

ທ່ານຈະຖືກຈ່າຍເງິນ OT ໃຫ້ສຳລັບເວລາເດີນທາງ ແລະ ການຝຶກຝົນທີ່ຖືກບົ່ງໃຫ້ເອົາໂດຍກົມ DSHS ຖ້າຫາກວ່າຊົ່ວໂມງທັງໝົດທີ່ທ່ານໄດ້ເຮັດວຽກຢູ່ໃນອາທິດເຮັດວຽກກາຍເກີນ 40. ຊົ່ວໂມງ PTO ບໍ່ຖືກຖືວ່າເປັນຊົ່ວໂມງເຮັດວຽກ, ເພາະສະນັ້ນແລ້ວມັນຈຶ່ງບໍ່ມີເງື່ອນໄຂໄດ້ຮັບການຈ່າຍເງິນ OT ຈັກເທື່ອ.

**ລາຍລະອຽດສຳລັບ IPS ຜູ້ທີ່ມີ WWL ຖາວອນ 40 ຊົ່ວໂມງ**

**10. ຂ້າພະເຈົ້າສາມາດເຮັດວຽກຫລາຍກວ່າ 40 ຊົ່ວໂມງຢູ່ໃນອາທິດເຮັດວຽກບໍ່?**

ທ່ານຈະບໍ່ເຮັດວຽກຫລາຍກວ່າ 40 ຊົ່ວໂມງບໍລິການຢູ່ໃນອາທິດເຮັດວຽກນອກຈາກວ່າທ່ານໄດ້ຮັບການອະນຸມັດໂດຍສະເພາະສຳລັບລູກຄ້າຈາກກົມ DSHS ໃຫ້ເຮັດວຽກກາຍເກີນ 40 ຊົ່ວໂມງຊົ່ວຄາວ.

**11. ຂ້າພະເຈົ້າສາມາດເຮັດວຽກຫລາຍກວ່າ WWL ຖາວອນຂອງຂ້າພະເຈົ້າໄດ້ບໍ່ຖ້າຫາກວ່າຂ້າພະເຈົ້າເຮັດວຽກໃຫ້ລູກຄ້າຫລາຍໆຄົນ?**

ທ່ານຕ້ອງໄດ້ຄວບຄຸມກຳກັບນຳຊົ່ວໂມງບໍລິການລູກຄ້າທຸກໆຊົ່ວໂມງພາຍໃນ WWL ຖາວອນຂອງທ່ານ, ບໍ່ກ່ຽວວ່າທ່ານຈະເຮັດວຽກໃຫ້ລູກຄ້າຈັກຄົນ. ຖ້າຫາກວ່າທ່ານເຮັດວຽກໃຫ້ລູກຄ້າຫລາຍກວ່າຄົນນຶ່ງ, ທ່ານຕ້ອງໄດ້ເຮັດນັດເວລາຂອງທ່ານນຳແຕ່ລະຄົນເພື່ອຈະໃຫ້ແນ່ໃຈວ່າ, ເມື່ອເວລາທ່ານບວກຊົ່ວໂມງບໍລິການຂອງທ່ານທັງໝົດເຂົ້າໃສ່ກັນ, ທ່ານຈະບໍ່ເຮັດວຽກຫລາຍກວ່າ WWL ຖາວອນຂອງທ່ານ.

**12. ຂ້າພະເຈົ້າຄວນຈະເຮັດແນວໃດຖ້າຫາກວ່າລູກຄ້າຜູ້ທີ່ຂ້າພະເຈົ້າເຮັດວຽກໃຫ້ຕ້ອງການທີ່ຈະນັດໃຫ້ຂ້າພະເຈົ້າເຮັດວຽກຫລາຍເກີນກວ່າຊົ່ວໂມງທີ່ຂ້າພະເຈົ້າມີຢູ່ໃນ WWL ຖາວອນຂອງຂ້າພະເຈົ້າ?**

- ອະທິບາຍວ່າທ່ານບໍ່ໄດ້ຮັບອະນຸຍາດໃຫ້ເຮັດວຽກຫລາຍເກີນກວ່າ WWL ຂອງທ່ານ ແລະ ວ່າການເຮັດແນວນັ້ນຈະຖືກຖືວ່າເປັນການທວງເອົາສ່ວນທີ່ກາຍເກີນ. ເບິ່ງ #19 ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບການທວງເອົາສ່ວນທີ່ກາຍເກີນ
- ຢ່າສູ້ຮັບເອົາການແຕ່ງຕັ້ງວຽກໃຫ້ຊຶ່ງຈະເຮັດໃຫ້ທ່ານທີ່ຈະເຮັດວຽກຫລາຍເກີນກວ່າ WWL ຂອງທ່ານ.
- ແນະນຳຊັກຊວນໃຫ້ລູກຄ້າທີ່ຈະໃຊ້ຜູ້ໃຫ້ການບໍລິການຄົນອື່ນຕື່ມອີກ.
- ແນະນຳຊັກຊວນໃຫ້ລູກຄ້າທີ່ຈະຕິດຕໍ່ຫາຜູ້ຈັດການເອກສານຂອງເຂົາເຈົ້າຖ້າຫາກວ່າລູກຄ້າມີຄວາມຫຍຸ້ງຍາກໃນການເຂົ້າໃຈຂອບເຂດຂອງທ່ານ ຫລື ບໍ່ສາມາດຊອກຫາຜູ້ໃຫ້ການບໍລິການຄົນອື່ນຕື່ມອີກ.
- ກະຣຸນາເບິ່ງ #18 ຢູ່ໜ້າ 3 ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບຄວາມຕ້ອງການສຸກເສີນ ແລະ ທັນທີທັນໃດ.

**ລາຍລະອຽດສໍາລັບ IPS ຜູ້ທີ່ມີຖາວອນຈໍານວນ 40.25 ຊົ່ວໂມງ ຫລື ຫລາຍກວ່າ**

13. **ຂ້າພະເຈົ້າສາມາດເຮັດວຽກຫລາຍກວ່າ 40 ຊົ່ວໂມງຢູ່ໃນອາທິດເຮັດວຽກໄດ້ບໍ່?**

ຖ້າຫາກວ່າທ່ານໄດ້ຮັບໜັງສືແຈ້ງການຈາກກົມ DSHS ວ່າ WWL ຖາວອນຂອງທ່ານຫລາຍກວ່າ 40 ຊົ່ວໂມງ ຫລື ຖ້າຫາກວ່າທ່ານມີການເພີ້ມຂຶ້ນໃນ WWL ສະເພາະເຈາະຈົງສໍາລັບລູກຄ້າທີ່ຖືກອະນຸມັດຊົ່ວຄາວ, ທ່ານຈະເຮັດວຽກຮອດຈໍານວນຊົ່ວໂມງຢູ່ໃນໃບແຈ້ງການຂອງທ່ານ.

14. **ຂ້າພະເຈົ້າຄວນຈະເຮັດແນວໃດຖ້າຫາກວ່າຂ້າພະເຈົ້າເຮັດວຽກໃຫ້ລູກຄ້າຫລາຍກວ່າຄົນນຶ່ງ?**

ກະຣຸນາເບິ່ງຄໍາຕອບຕໍ່ຄໍາຖາມ #11.

15. **ຈະເຮັດແນວໃດຖ້າຫາກວ່າລູກຄ້າຜູ້ທີ່ຂ້າພະເຈົ້າເຮັດວຽກໃຫ້ຢາກໃຫ້ຂ້າພະເຈົ້າປັບແປງຊົ່ວໂມງຂອງຂ້າພະເຈົ້າເພື່ອຈະເຮັດວຽກຫລາຍກວ່າ WWL ຖາວອນຂອງຂ້າພະເຈົ້າຢູ່ໃນອາທິດນຶ່ງ?**

ທ່ານອາດຈະສາມາດປັບຊົ່ວໂມງຂອງທ່ານຖ້າຫາກວ່າສິ່ງຕໍ່ລົງໄປນີ້ທຸກໆຢ່າງຫາກເປັນຄວາມຈິງ:

- ລູກຄ້າມີຄວາມຕ້ອງການ; ແລະ
- ການເຮັດວຽກຊົ່ວໂມງເພີ້ມເຕີມຈະບໍ່ກາຍເກີນຊົ່ວໂມງທີ່ຖືກປະເມີນຜົນເບິ່ງແລ້ວປະຈໍາເດືອນຂອງລູກຄ້າ; ແລະ
- ການເຮັດວຽກຫລາຍກວ່າໃນອາທິດນຶ່ງຈະບໍ່ເປັນຜົນໃຫ້ລູກຄ້າຂາດການເບິ່ງແຍງດູແລຈໍາເປັນໃນອາທິດອື່ນໆຂອງເດືອນ; ແລະ
- ການເຮັດວຽກຫລາຍກວ່າໃນອາທິດນຶ່ງຈະບໍ່ເຮັດໃຫ້ທ່ານຕ້ອງໄດ້ເຮັດວຽກເກີນເວລາຕື່ມອີກຢູ່ໃນເດືອນຫລາຍກວ່າທີ່ທ່ານຕ້ອງໄດ້ເຮັດຖ້າຫາກວ່າທ່ານໄດ້ເຮັດຮອດ WWL ຂອງທ່ານແລ້ວໃນທຸກໆອາທິດຂອງເດືອນນັ້ນ.

ເມື່ອເວລາ WWL ຂອງທ່ານກາຍເກີນ 40 ຊົ່ວໂມງແລ້ວ, ທ່ານຈະປັບຊົ່ວໂມງຂອງທ່ານໄດ້ຕາມທີ່ຕ້ອງການນານເທົ່ານານທີ່ທ່ານບໍ່ເຮັດວຽກເກີນເວລາຕື່ມອີກຢູ່ໃນເດືອນຫລາຍກວ່າທີ່ທ່ານຈະເຮັດວຽກຕາມປົກກະຕິ. ຈໍານວນຂອງຊົ່ວໂມງເຮັດວຽກເກີນເວລາປະຈໍາເດືອນໄດ້ຖືກຄິດໄລ່ໂດຍກັກຫັກເອົາ 40 ຊົ່ວໂມງອອກຈາກ WWL ຂອງທ່ານ ແລະ ຄູນຈໍານວນທີ່ຍັງເຫລືອໃສ່ຈໍານວນຂອງວັນເສົາຢູ່ໃນເດືອນນັ້ນ.

*ຕົວຢ່າງ:*
*WWL ຂອງທ້າວໂຣເຊແມ່ນ 46 ຊົ່ວໂມງ. ຈໍານວນຂອງຊົ່ວໂມງເຮັດວຽກເກີນເວລາປະຈໍາເດືອນທີ່ທ້າວໂຣເຊສາມາດເຮັດໄດ້ຂຶ້ນນໍາຈໍານວນຂອງວັນເສົາຢູ່ໃນເດືອນທີ່ລາວເຮັດວຽກຢູ່.*
***ການຄິດໄລ່ 5 ວັນເສົາ:*** *46 – 40 = 6 x 5 = 30*
***ການຄິດໄລ່ 4 ວັນເສົາ:*** *46-40=6 x 4 = 24*
*ລູກຄ້າທີ່ທ້າວໂຣເຊເຮັດວຽກໃຫ້ຕ້ອງການໃຫ້ລາວເຮັດວຽກໃນຕາຕະລາງເວລາທີ່ປ່ຽນໄປມາໄດ້ຕະລອດເດືອນ, ຊຶ່ງທ້າວໂຣເຊສາມາດເຮັດໄດ້ນານເທົ່ານານທີ່ລາວບໍ່ເຮັດວຽກຫລາຍກວ່າ 30 ຊົ່ວໂມງຂອງວຽກເກີນເວລາຢູ່ໃນເດືອນທີ່ມີ 5 ວັນເສົາ, ຫລື 24 ຊົ່ວໂມງຂອງວຽກເກີນເວລາຢູ່ໃນເດືອນທີ່ມີ 4 ວັນເສົາ.*

ທ່ານຍັງຈະປັບປ່ຽນຊົ່ວໂມງຂອງທ່ານເພື່ອຈະເຮັດວຽກຫລາຍກວ່າ WWL ຂອງທ່ານຖ້າຫາກວ່າລູກຄ້າຜູ້ທີ່ທ່ານເຮັດວຽກໃຫ້ຊື້ເອົາຊົ່ວໂມງເຮັດວຽກເກີນເວລາຕື່ມອີກດ້ວຍເງິນທຶນ New Freedom ຫລື Veteran Directed Homecare Services ຂອງເຂົາເຈົ້າ.

16. **ຂ້າພະເຈົ້າຄວນຈະເຮັດແນວໃດຖ້າຫາກວ່າລູກຄ້າຜູ້ທີ່ຂ້າພະເຈົ້າເຮັດວຽກໃຫ້ຢາກເຮັດນັດໃຫ້ຂ້າພະເຈົ້າທີ່ຈະເຮັດວຽກເກີນເວລາຫລາຍກວ່າຊົ່ວໂມງວຽກເກີນເວລາປະຈໍາເດືອນທັງໝົດທີ່ຂ້າພະເຈົ້າມີໄວ້ຢູ່ໃນ WWL ຖາວອນຂອງຂ້າພະເຈົ້າ?**

ກະຣຸນາເບິ່ງຄໍາຕອບຕໍ່ຄໍາຖາມ #12.

**ຂອບເຂດອາທິດເຮັດວຽກເຈາະຈົງຂອງລູກຄ້າຊົ່ວຄາວ (CSWWL)**

17. **CSWWL ຊົ່ວຄາວແມ່ນຫຍັງ?**

ລູກຄ້າຜູ້ທີ່ທ່ານເຮັດວຽກໃຫ້ອາດຈະຮ້ອງຂໍໃຫ້ກົມ DSHS ທີ່ຈະເພີ້ມຂຶ້ນຊົ່ວຄາວ WWL ຂອງທ່ານໃນຂະນະທີ່ເຂົາເຈົ້າຊອກຫາຜູ້ໃຫ້ການບໍລິການເພີ້ມເຕີມອີກເພື່ອຈະຕອບສະນອງຄວາມຕ້ອງການຂອງເຂົາເຈົ້າ. ກົມ DSHS ຈະຕອບທ່ານໂດຍທາງໄປສະນີດ້ວຍໜັງສືອະນຸມັດ ຫລື ປະຕິເສດ. ຖ້າຖືກອະນຸມັດ, ໃບແຈ້ງການຍັງຈະບອກທ່ານອີກຄືກັນວັນທີທີ່ການອະນຸມັດຈະເລີ້ມຕົ້ນ ແລະ ຈົບລົງ ແລະ ຈໍານວນຊົ່ວໂມງທີ່ຖືກອະນຸມັດໃຫ້. ລູກຄ້າຜູ້ທີ່ທ່ານເຮັດວຽກໃຫ້ຍັງຈະໄດ້ຮັບໂກປີໃບນຶ່ງອີກຄືກັນ. ຄໍາຮ້ອງຂໍໃບໜັງສືແຈ້ງການໃບນີ້ຍັງເປັນທີ່ຮູ້ຈັກກັນອີກວ່າແມ່ນໃບຄໍາຮ້ອງ CSWWL. ກົມ DSHS ຈະບໍ່ອະນຸມັດ WWL ຊົ່ວຄາວໃຫ້ທີ່ກາຍເກີນຊົ່ວໂມງປະຈໍາເດືອນທີ່ຖືກປະເມີນຜົນເບິ່ງແລ້ວຂອງລູກຄ້າ.

## ຄວາມຕ້ອງການສຸກເສີນ

**18. ຂ້າພະເຈົ້າຄວນຈະເຮັດແນວໃດຖ້າຫາກວ່າຂ້າພະເຈົ້າໄດ້ເຮັດວຽກຫມົດຊົ່ວໂມງຢູ່ໃນ WWL ຂອງຂ້າພະເຈົ້າແລ້ວ ແຕ່ວ່າລູກຄ້າມີຄວາມຕ້ອງການສຸກເສີນ ແລະ ທັນທີທັນໃດ ແລະ ຂ້າພະເຈົ້າຈຳເປັນຕ້ອງໄດ້ດຳເນີນເຮັດວຽກຕໍ່ໄປເພື່ອຈະອູ້ມຊູສຸຂະພາບ ຫລື ຄວາມປອດພັຍຂອງລູກຄ້າ?**

- ຢູ່ນຳລູກຄ້າຈົນກວ່າສະພາບການຈະປອດພັຍ ແລະ ຫມັ້ນຄົງ.
- ຖ້າຫາກວ່າມັນເປັນເຫດການສຸກເສີນທີ່ຕ້ອງມີການປິ່ນປົວພະຍາບານສຸກເສີນ, ຕິດຕໍ່ຫາ 9-1-1.
- ປຸດວັນເຮັດວຽກຂອງທ່ານໂດຍໄວເທົ່າທີ່ຈະໄວ້ໄດ້ເມື່ອມັນປອດພັຍທີ່ຈະປຸດໄດ້.
- ຕິດຕໍ່ຫາຜູ້ຈັດການເອກສານຂອງທ່ານໃນວັນເຮັດວຽກຕໍ່ມາເພື່ອຈະອະທິບາຍສະພາບການ.

## ການທວງເອົາສ່ວນທີ່ກາຍເກີນ

**19. ການທວງເອົາສ່ວນທີ່ກາຍເກີນແມ່ນຫຍັງ?**

ການທວງເອົາສ່ວນທີ່ກາຍເກີນເກີດຂື້ນເມື່ອເວລາ:

- ທ່ານເຮັດວຽກຊົ່ວໂມງບໍລິການຢູ່ໃນເດືອນຫລາຍກວ່າທີ່ທ່ານຖືກອະນຸຍາດທີ່ຈະເອົາໃຫ້; ຫລື
- ທ່ານເຮັດວຽກກາຍເກີນ WWL ຂອງທ່ານຊຶ່ງທ່ານບໍ່ໄດ້ຖືກອະນຸຍາດໃຫ້ເຮັດໂດຍກົມ DSHS; ຫລື
- ທ່ານໄດ້ທວງເອົາເວລາການເດີນທາງຫລາຍເກີນກວ່າທີ່ທ່ານໄດ້ຖືກອະນຸຍາດໃຫ້ເອົາໃຫ້ຢູ່ໃນອາທິດເຮັດວຽກ.

**20. ການກະທຳຕໍ່ສັນຍາແມ່ນຫຍັງ?**

ການກະທຳຕໍ່ສັນຍາແມ່ນໃບແຈ້ງການທີ່ຖືກສົ່ງໄປໃຫ້ທ່ານໂດຍກົມ DSHS.  ໃບແຈ້ງການຈະແຈ້ງບອກທ່ານວ່າທ່ານໄດ້ເຮັດວຽກຊົ່ວໂມງບໍລິການເກີນເວລາ ຫລື ຊົ່ວໂມງເວລາເດີນທາງ ຫລາຍເກີນກວ່າທີ່ທ່ານໄດ້ຖືກອະນຸມັດໃຫ້ເຮັດ.

**21. ແມ່ນຫຍັງຈະເກີດຂຶ້ນຖ້າຫາກວ່າຂ້າພະເຈົ້າເຮັດວຽກກາຍເກີນ WWL ຫລື ຂອບເຂດເວລາເດີນທາງຂອງຂ້າພະເຈົ້າ?**

- ແຕ່ລະເທື່ອທີ່ທ່ານທວງເອົາສ່ວນທີ່ກາຍເກີນ, ທ່ານຈະໄດ້ຮັບໃບແຈ້ງການກະທຳຕໍ່ສັນຍາ ແລະ ຣາຍຣະອຽດຈາກກົມ DSHS ເຕືອນທ່ານກ່ຽວກັບຄວາມສຳຄັນທີ່ຈະບໍ່ເຮັດວຽກຊົ່ວໂມງເກີນເວລາທີ່ບໍ່ໄດ້ຖືກອະນຸມັດໃຫ້. ໃບແຈ້ງການຍັງຈະຖືກສົ່ງໄປຫາລູກຄ້າຜູ້ທີ່ທ່ານເຮັດວຽກໃຫ້ອີກຄືກັນ ແລະ ຜູ້ຕາງຫນ້າຂອງເຂົາເຈົ້າ.
- ໃນໂອກາດເທື່ອທີສາມຂອງການທວງເອົາສ່ວນທີ່ກາຍເກີນ, ສັນຍາຂອງທ່ານອາດຈະຖືກຕັດ ຫລື ທ່ານອາດຈະກາຍເປັນບໍ່ມີເງື່ອນໄຂທີ່ຈະໄດ້ຮັບການຈ່າຍເງິນໃຫ້ເປັນເວລາ 90 ວັນ. ຖ້າສັນຍາຂອງທ່ານໄດ້ຖືກຕັດ ທ່ານຕ້ອງໄດ້ລໍຖ້າ 90 ວັນກ່ອນທີ່ທ່ານຈະມີເງື່ອນໄຂທີ່ຈະໄດ້ສັນຍາໃຫມ່ອີກ.
- ຖ້າຫາກວ່າທ່ານກາຍເກີນຢ່າງຮ້າຍແຮງ ຫລື ຕິດຕໍ່ກັນໄປ ໃນຂອບເຂດອາທິດເຮັດວຽກ ຫລື ຂອບເຂດເວລາເດີນທາງຂອງທ່ານ, ກົມ DSHS ອາດຈະຕັດສັນຍາຂອງທ່ານໄປໃນຕົວໂລດ ແລະ ບໍ່ຍອມຮັບທີ່ຈະເຮັດສັນຍາໃຫມ່ນຳທ່ານ.

**22. ການກະທຳຕໍ່ສັນຍາຈະຢູ່ດົນນານປານໃດຢູ່ໃນສຳນວນບັນທຶກສັນຍາຂອງຂ້າພະເຈົ້າ?**

ການກະທຳຕໍ່ສັນຍາແຕ່ລະອັນຈະຍັງເປີດຢູ່ເປັນເວລາ 12 ເດືອນຈາກວັນທີຂອງໃບແຈ້ງການກະທຳຕໍ່ສັນຍາ. ຫລັງຈາກ 12 ເດືອນ, ການກະທຳຕໍ່ສັນຍາຈະຖືກປິດລົງ.

**23. ຂ້າພະເຈົ້າສາມາດຫລີກເວັ້ນການກະທຳຕໍ່ສັນຍາໄດ້ແນວໃດ?**

- ວາງແຜນຕາຕະລາງເຮັດວຽກຂອງທ່ານລ່ວງຫນ້າຢູ່ເລື້ອຍໆ ແລະ ຂຽນລົງໄວ້.
- ຖ້າຫາກວ່າຄວາມຕ້ອງການຂອງລູກຄ້າປ່ຽນແປງ ແລະ ທ່ານຕ້ອງໄດ້ເຮັດວຽກໃນຕາຕະລາງເວລາແຕກຕ່າງຊຶ່ງສະທ້ອນເຖິງ WWL ຂອງທ່ານ, ຕິດຕໍ່ຫາຜູ້ຈັດການເອກສານຂອງລູກຄ້າໂດຍທັນທີໂລດ.
- ບັນທຶກເວລາເຮັດວຽກຂອງທ່ານໄວ້ໃນເຈັ້ຽບັນທຶກເວລາຂອງທ່ານຫລັງຈາກແຕ່ລະວັນທີ່ທ່ານເຮັດວຽກ, ມັນອາດຈະຊ່ວຍໄດ້ອີກທີ່ຈະບັນທຶກໄວ້ອີກຄືກັນຢູ່ໃນເຈັ້ຽປະຕິທິນ. ກວດເບິ່ງຢູ່ເລື້ອຍໆເພື່ອຈະໃຫ້ແນ່ໃຈວ່າທ່ານຍັງຢູ່ພາຍໃນ WWL ຂອງທ່ານ.
- DSHS ມີແຫລ່ງຊ່ວຍເຫລືອໄວ້ໃຫ້ເພື່ອຈະຊ່ວຍເຫລືອທ່ານ ແລະ ນາຍຈ້າງ/ລູກຄ້າຂອງທ່ານ ໃຫ້ຮຽນຮູ້ເພີ້ມເຕີມກ່ຽວກັບການຄວບຄຸມເບິ່ງນຳຕາຕະລາງເວລາຂອງທ່ານເພື່ອຈະຢູ່ພາຍໃນຂອບເຂດ WWL ຂອງທ່ານ. ແຫລ່ງຊ່ວຍເຫລືອເຫລົ່ານີ້ຈະມີໄວ້ໃຫ້ຢູ່ທີ່ **www.dshs.wa.gov/altsa/IPOT.**